# ສະຫຼອງວັນວິດຖ່າຍໂລກ ຄົບຮອບ ໑໐ ປີ

★ ທ້າຍອາທິດຜ່ານມາ ທີ່ເມືອງເມິງຜາສຸກ ແລະ ເມືອງປາກທາ ແຂວງ ບໍ່ແກ້ວ ໄດ້ມີການສະເຫຼີມສະຫຼອງວັນວິດຖ່າຍໂລກ ຄົບຮອບ 10 ປີ ວັນທີ 19/11/2001-19/11/2011) ຊຶ່ງມີອຳນາດການປົກຄອງເມືອງ ພໍ່ແມ່ ປະຊາຊົນ ແລະ ນັກຮຽນພາຍໃນ 3 ເມືອງ ເຂົ້າຮ່ວມພັນກ່ວາຄົນ.

ອ່ານຕໍ່ໜ້າ ໖



## ສະຫຼອງວັນ...

ການສະເຫຼີມສະຫຼອງຄັ້ງນີ້ແມ່ນໂຄງການນ້ຳສະອາດ ສຸຂະອະນາໄມ ແລະ ສຸຂະພິບານຂອງອົງການແພຼນສາກົນເປັນຜູ້ຈັດຂຶ້ນໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ພາຍໃນງານແມ່ນໄດ້ເນັ້ນໃສ່ຄວາມສຳຄັນຕໍ່ກັບການນຳໃຊ້ວິດຖ່າຍ ແລະ ການລ້າງມື ຫຼັງຈາກໃຊ້ແລ້ວ ໂດຍຈັດໃຫ້ມີຫຼາຍກິດຈະກຳ ເປັນຕົ້ນ ການສະແດງລະຄອນກ່ຽວກັບການຮັກສາ ແລະ ຄຸນປະໂຫຍດຂອງການນຳໃຊ້ຫ້ອງນ້ຳ ການສາທິດວິທີການລ້າງມື ແລະ ການຮ້ອງເພງທີ່ໜ້າຈົດຈຳກ່ຽວກັບນ້ຳສະອາດ ສຸຂະອະນາໄມ ແລະ ສຸຂະພິບານ.

ແລະ ສຸຂະພິບານ.

ວັນວິດຖ່າຍໂລກເປັນວັນໜຶ່ງທີ່ໂລກໄດ້ໃຫ້ຄວາມສຳຄັນແຕ່ລະປີ ຫຼາຍປະເທດໄດ້ຈັດໃຫ້ມີການສະເຫຼີມສະຫຼອງວັນດັ່ງກ່າວນີ້ຂຶ້ນ ເພື່ອເປັນການທົບທວນທວນຄືນ ເຮັດໃຫ້ທຸກຄົນມາຮູ້ຈັກ ແລະ ໃຫ້ຄວາມສຳຄັນຕໍ່ວິດຖ່າຍ ໂດຍສະເພາະແມ່ນໃຫ້ພ້ອມກັນຫັນມານຳໃຊ້ວິດຖ່າຍເພື່ອເປັນການຮັກສາຄວາມສະອາດ ແລະ ທັງເປັນການປ້ອງກັນພະຍາດອີກດ້ວຍ.

ກິດຈະກຳໃນການສະເຫຼີມສະຫຼອງວັນວິດຖ່າຍໂລກຄັ້ງນີ້ ປະຊາຊົນ ແລະ ນັກຮຽນຊຸມຊົນຂອງ 3 ເມືອງໄດ້ພ້ອມກັນແຫ່ຂະບວນຖືປ້າຍຄຳຂວັນທີ່ວ່າ ບໍ່ໃຫ້ມີການຖ່າຍຊະຊາຍ ຕ້ອງລ້າງມືດ້ວຍສະບູ ຕ້ອງດື່ມນ້ຳຕົ້ມ ຫຼື ນ້ຳທີ່ຖືກກັ່ນຕອງແລ້ວ ແລະ ຮັກສາສິ່ງແວດລ້ອມໃຫ້ສະອາດ ກິດຈະກຳທີ່ນຳມາສະທ້ອນໃຫ້ເຫັນຄັ້ງນີ້ເປັນກິດຈະກຳໜຶ່ງທີ່ເປັນການປູກຈິດສຳນຶກໃຫ້ເດັກນ້ອຍ ແລະ ພໍ່ແມ່ປະຊາຊົນທີ່ຢູ່ເຂດຊົນນະບົດຫ່າງໄກສອກຫຼີກໃຫ້ຫັນມານຳໃຊ້ວິດຖ່າຍ ແລະ ນຳໃຊ້ນ້ຳສະອາດດື່ມຫຼາຍຂຶ້ນ.